ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1483/ຫກ

ນະຄອນຫຼວງວຽງຈັນ, ວັນທີ 8 ເມສາ 2026

## ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນການຈັດຊື້ເຄື່ອງສາທິດວິທະຍາສາດ (ເຄື່ອງຫ້ອງທົດລອງ) ສະໜອງແຈກຢາຍໃຫ້ແກ່ໂຮງຮຽນມັດທະຍົມສົມບູນເປົ້າໝາຍ ຈຳນວນ 02 ແຫ່ງ ຢູ່ 02 ແຂວງ ໃນທົ່ວປະເທດ, ໂດຍນຳໃຊ້ງົບປະມານແຫ່ງລັດ ປະຈຳປີ 2026 (ພາກ 62). ການຈັດຕັ້ງປະຕິບັດໃຫ້ສຳເລັດພາຍໃນ 04 ເດືອນ ພາຍຫຼັງເຊັນສັນຍາ (ລາຍລະອຽດຕ່າງໆ ລວມທັງເງື່ອນໄຂການປະມູນໄດ້ຄັດຕິດໃນເອກະສານການປະມູນ);
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ທີ່ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ ຕາມວັນເວລາລັດຖະການ;
4. ເອກະສານປະມູນຄົບຊຸດສາມາດຊື້ໄດ້ທີ່ ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ເລີ່ມແຕ່ວັນທີ 08/04/2026 ເປັນຕົ້ນໄປ, ໃນລາຄາຊຸດລະ 1.500.000 ກີບ (ໜຶ່ງລ້ານຫ້າແສນກີບ) ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ ຫຼື ເຊັກເງິນສົດ;
5. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ເວລາ 9:00 ໂມງ ຫຼື ກ່ອນເວລາ 9:00 ໂມງ ຂອງວັນທີ 11/05/2026, ທີ່ກຳນົດເປັນເວລາຊ້າສຸດໃນການຍື່ນຊອງປະມູນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ພິຈາລະນາ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;
6. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 9:00 ໂມງ, ຂອງວັນທີ 11/05/2026 ຢູ່ທີ່ ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ;
8. ທີ່ຢູ່ຕາມທີ່ຢູ່ຂ້າງເທິງແມ່ນ: ເຖິງ: ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ
   ທີ່ຕັ້ງຂອງຫ້ອງການ : ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນລ້ານຊ້າງ, ຕູ້ໄປສະນີ 067 (ເຂດສີສະເກດ) ບ້ານຊຽງຍືນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ
   ໂທລະສັບ: 021 255253; 020 22565174

ຫົວໜ້າຫ້ອງການ

ຮສ. ປອ. ຫຼ້າວັນ ວົງຄຳຂາວ